**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ...1338.........../ອຄ
ນະຄອນຫຼວງວຽງຈັນ, ວັນທີ.13..ພຶດສະພາ...2026

# ຂໍ້ຕົກລົງ
# ວ່າດ້ວຍການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 550/ນຍ, ລົງວັນທີ 01 ກັນຍາ 2025;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງວິສາຫະກິດ ສະບັບເລກທີ 0892/ກຄວ, ລົງວັນທີ 30 ເມສາ 2026.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ທະບຽນວິສາຫະກິດ ຈັດຕັ້ງປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງຖືກຕ້ອງ, ເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ວິສາຫະກິດເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຮັບປະກັນປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ ແລະ ວິສາຫະກິດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

ການປັບໃໝ ແມ່ນມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບວິສາຫະກິດ.

ການນຳໃຊ້ມາດຕະການອື່ນ ແມ່ນການນຳໃຊ້ມາດຕະການເພີ່ມຈາກການປັບໃໝ ຕໍ່ຜູ້ລະເມີດທາງດ້ານບໍລິຫານ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ກ່ຽວກັບວິສາຫະກິດ ເປັນຕົ້ນ ການສຶກສາອົບຮົມ, ກ່າວເຕືອນ, ໂຈະການນຳໃຊ້ໃບທະບຽນວິສາຫະກິດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການສຶກສາອົບຮົມ** ໝາຍເຖິງ ມາດຕະການທາງດ້ານບໍລິຫານ ເປັນຕົ້ນ ການສຶກສາອົບຮົມ ແລະ ກ່າວເຕືອນ ໂດຍການເຮັດບົດບັນທຶກ ເພື່ອໃຫ້ຜູ້ລະເມີດປັບປຸງແກ້ໄຂການລະເມີດຂອງຕົນ;

2. **ການໂຈະການນໍາໃຊ້ໃບທະບຽນວິສາຫະກິດ** ໝາຍເຖິງ ມາດຕະການທາງດ້ານບໍລິຫານເພີ່ມ ທີ່ນໍາໃຊ້ຕໍ່ວິສາຫະກິດ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ເຈົ້າໜ້າທີ່ທະບຽນວິສາຫະກິດ, ວິສາຫະກິດ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດກົດໝາຍວ່າດ້ວຍວິສາຫະກິດ ຢູ່ ສປປ ລາວ.

ຂໍ້ຕົກລົງສະບັບນີ້ ບໍ່ນໍາໃຊ້ສໍາລັບ ທຸລະກິດທີ່ບໍ່ຈໍາເປັນຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ການລະເມີດ ແລະ ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ

**ມາດຕາ 5 ການລະເມີດກົດໝາຍວ່າດ້ວຍວິສາຫະກິດ**

ພຶດຕິກໍາ ທີ່ເປັນການລະເມີດກົດໝາຍວ່າດ້ວຍວິສາຫະກິດ ມີດັ່ງນີ້:

**ກ. ພຶດຕິກໍາ ທີ່ເປັນການລະເມີດ ຂອງບຸກຄົນ, ນິຕິບຸກຄົນ ແລະ ວິສາຫະກິດ ຄື:**

1. ການເຄື່ອນໄຫວທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ;
2. ການດໍາເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ;
3. ການນໍາເອົາໃບທະບຽນວິສາຫະກິດ ໃຫ້ບຸກຄົນອື່ນນໍາໃຊ້;
4. ການປອມແປງໃບທະບຽນວິສາຫະກິດ ຫຼື ນໍາໃຊ້ໃບທະບຽນວິສາຫະກິດປອມແປງ;
5. ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງ ແລະ/ຫຼື ບໍ່ຖືກຕ້ອງຕາມກົດໝາຍ;
6. ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດ;
7. ການຍຸບເລີກວິສາຫະກິດ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດ;
8. ການບໍ່ຕິດປ້າຍຊື່ວິສາຫະກິດ;
9. ການບໍ່ປົດປ້າຍຊື່ວິສາຫະກິດ ພາຍຫຼັງຍຸບເລີກວິສາຫະກິດ;
10. ການນໍາໃຊ້ໃບທະບຽນວິສາຫະກິດ ພາຍຫຼັງຖືກໂຈະການນໍາໃຊ້ໃບທະບຽນວິສາຫະກິດ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ;
11. ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ທີ່ບໍ່ມີກົດລະບຽບຂອງຕົນ;
12. ບໍລິສັດຈໍາກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ເປີດກອງປະຊຸມສາມັນຂອງຜູ້ຖືຮຸ້ນ;
13. ຜູ້ຈັດການຂອງ ວິສາຫະກິດຮຸ້ນສ່ວນ ແລະ ຜູ້ອໍານວຍການຂອງບໍລິສັດ ທີ່ບໍ່ອອກໃບຮຸ້ນ;
14. ບໍລິສັດຈໍາກັດ ທີ່ບໍ່ສ້າງບັນຊີທະບຽນຜູ້ຖືຮຸ້ນ;
15. ບໍລິສັດຈໍາກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ສ້າງບັນຊີທະບຽນຜູ້ອໍານວຍການ;
16. ບໍລິສັດຈໍາກັດ ທີ່ບໍ່ມີສະພາບໍລິຫານ ແລະ ຜູ້ກວດສອບບັນຊີ;
17. ບໍລິສັດຈໍາກັດ ທີ່ບໍ່ມີຄັງສໍາຮອງຕາມລະບຽບການ.

**ຂ. ພຶດຕິກໍາ ທີ່ເປັນການລະເມີດ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ຄື:**

1. ການອອກໜັງສື ທີ່ບໍ່ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຫຼື ສັ່ງໃຫ້ວິສາຫະກິດຕໍ່ອາຍຸໃບທະບຽນວິສາຫະກິດ;

2. ການປະຕິເສດການແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ ໂດຍບໍ່ມີເຫດຜົນ;

3. ການຮຽກເອົາເອກະສານເພີ່ມເຕີມ ແລະ ການກົດໜ່ວງຖ່ວງດຶງເອກະສານແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ;

4. ການປະຕິເສດການເປີດເຜີຍຂໍ້ມູນທະບຽນວິສາຫະກິດ.

ສຳລັບ ພຶດຕິກຳທີ່ເປັນການລະເມີດຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ຕາມທີ່ກຳນົດໄວ້ໃນຂໍ້ ຂ ຂອງມາດຕານີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ຫຼື ປົດການເປັນເຈົ້າໜ້າທີ່ທະບຽນວິສາຫະກິດ.

**ມາດຕາ 6 ການເຄື່ອນໄຫວທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ເຄື່ອນໄຫວດຳເນີນທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ 5,000,000 ກີບ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;
2. ຄັ້ງທີສອງ ຈະຖືກປັບໃໝ 10,000,000 ກີບ ພ້ອມທັງເຮັດບົດບັນທຶກ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງເຮັດບົດບັນທຶກ.

ບຸກຄົນ ຫຼື ນິຕິບຸກຄົນ ຕ້ອງຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດກ່ຽວຂ້ອງພາຍໃນ ສິບວັນ ລັດຖະການນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 7 ການດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດ**

ການດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດຈາກຂະແໜງການກ່ຽວຂ້ອງ ໃນກິດຈະການທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ກຳນົດໄວ້ກົດໝາຍ ແລະ ລະບຽບການ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 8 ການນຳເອົາໃບທະບຽນວິສາຫະກິດ ໃຫ້ບຸກຄົນອື່ນນຳໃຊ້**

ການນຳເອົາໃບທະບຽນວິສາຫະກິດ ໃຫ້ບຸກຄົນອື່ນນຳໃຊ້ ຈະຖືກນຳໃຊ້ມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກປັບໃໝ 10,000,000 ກີບ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;
2. ຄັ້ງທີສອງ ຈະຖືກປັບໃໝ 20,000,000 ກີບ ພ້ອມທັງເຮັດບົດບັນທຶກ ແລະ ຈະຖືກໂຈະການນຳໃຊ້ໃບທະບຽນວິສາຫະກິດ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ 50,000,000 ກີບຕໍ່ຄັ້ງ ພ້ອມທັງເຮັດບົດບັນທຶກ.

ຜູ້ທີ່ນຳໃຊ້ໃບທະບຽນວິສາຫະກິດ ຂອງວິສາຫະກິດອື່ນ ຖືວ່າເປັນການເຄື່ອນໄຫວທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຈະຖືກປະຕິບັດມາດຕະການ ຕາມທີ່ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 9 ການປອມແປງໃບທະບຽນວິສາຫະກິດ ຫຼື ນຳໃຊ້ໃບທະບຽນວິສາຫະກິດປອມແປງ**

ບຸກຄົນ, ນິຕິບຸກຄົນ ຫຼື ວິສາຫະກິດ ຫາກໄດ້ປອມແປງໃບທະບຽນວິສາຫະກິດ, ລາຍເຊັນ, ຕາປະທັບຂອງເຈົ້າໜ້າທີ່ທະບຽນວິສາຫະກິດ, ໄດ້ຕັດ, ເພີ່ມຂໍ້ຄວາມໃນໃບທະບຽນວິສາຫະກິດ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

ຜູ້ທີ່ນຳໃຊ້ໃບທະບຽນວິສາຫະກິດປອມແປງ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

**ມາດຕາ 10 ການແຈ້ງຂໍ້ມູນບໍ່ຖືກຕ້ອງຕາມຄວາມຈິງ ແລະ/ຫຼື ບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນ ຫຼື ນິຕິບຸກຄົນ ຫາກໄດ້ແຈ້ງຂໍ້ມູນໃຫ້ ເຈົ້າໜ້າທີ່ທະບຽນວິສາຫະກິດ ກ່ຽວກັບ ການແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ແລະ/ຫຼື ບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ 10,000,000 ກີບຕໍ່ຄັ້ງ ພ້ອມທັງ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

ກໍລະນີ ເຈົ້າຂອງວິສາຫະກິດ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ທີ່ລະບຸຢູ່ໃນໃບທະບຽນວິສາຫະກິດ ບໍ່ແມ່ນຜູ້ປະກອບທຶນ ຫຼື ຜູ້ທີ່ໄດ້ຮັບຜົນປະໂຫຍດທີ່ແທ້ຈິງຈາກການດໍາເນີນທຸລະກິດ ຫາກເຈົ້າໜ້າທີ່ກ່ຽວຂ້ອງກວດພົບ ຈະຖືກປັບໃໝ 20,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

**ມາດຕາ 11 ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດ**

ວິສາຫະກິດ ທີ່ມີການຕົກລົງປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ເປັນຕົ້ນ ທີ່ຕັ້ງສໍານັກງານ, ໝາຍເລກໂທລະສັບຂອງວິສາຫະກິດ, ທຶນຈົດທະບຽນວິສາຫະກິດ, ຊື່ວິສາຫະກິດ, ຜູ້ອໍານວຍການ, ຜູ້ຈັດການ, ເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ສາຂາວິສາຫະກິດ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນທີ່ໄດ້ອອກໃບທະບຽນວິສາຫະກິດໃຫ້ ພາຍໃນ ສາມສິບວັນ ນັບແຕ່ວັນທີມີການຕົກລົງປ່ຽນແປງເປັນຕົ້ນໄປ ຈະຖືກປັບໃໝ 2,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

ກໍລະນີບໍລິສັດມະຫາຊົນ ທີ່ບໍ່ໄດ້ເງື່ອນໄຂ ຫຼື ບໍ່ມີຈຸດປະສົງລະດົມທຶນຜ່ານຕະຫຼາດທຶນ ຫຼື ສິ້ນສຸດສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນທີ່ໄດ້ອອກໃບທະບຽນວິສາຫະກິດໃຫ້ ເພື່ອປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ກ່ຽວກັບການປ່ຽນແປງຮູບແບບບໍລິສັດ ຫຼື ຍຸບເລີກ ແລະ ດໍາເນີນການຊໍາລະສະສາງ ຈະຖືກປັບໃໝ 5,000,000 ກີບຕໍ່ຄັ້ງ ພ້ອມທັງ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

**ມາດຕາ 12 ການຍຸບເລີກວິສາຫະກິດ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດ**

ວິສາຫະກິດ ທີ່ຢຸດເຊົາການເຄື່ອນໄຫວທຸລະກິດແລ້ວ ຫຼື ແຈ້ງສິ້ນສຸດເລກປະຈໍາຕົວຜູ້ເສຍອາກອນນໍາເຈົ້າໜ້າທີ່ສ່ວຍສາອາກອນແລ້ວ ໂດຍບໍ່ແຈ້ງຍຸບເລີກວິສາຫະກິດ ພາຍໃນ ສິບວັນລັດຖະການ ຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດບ່ອນທີ່ໄດ້ອອກໃບທະບຽນວິສາຫະກິດໃຫ້ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ຕ້ອງແຈ້ງຍຸບເລີກວິສາຫະກິດນໍາເຈົ້າໜ້າທີ່ທະບຽນວິສາຫະກິດ ພາຍໃນ ສິບວັນ ລັດຖະການ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 13 ການບໍ່ຕິດປ້າຍຊື່ວິສາຫະກິດ**

ວິສາຫະກິດ ທີ່ບໍ່ຕິດປ້າຍຊື່ວິສາຫະກິດ ຕາມເນື້ອໃນໃບທະບຽນວິສາຫະກິດ ແລະ ບໍ່ຕິດປ້າຍຊື່ວິສາຫະກິດ ຢູ່ດ້ານໜ້າທີ່ຕັ້ງສໍານັກງານຂອງຕົນ ພາຍໃນ ຫົກສິບວັນ ນັບແຕ່ວັນທີໄດ້ຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;
2. ຄັ້ງທີສອງ ຈະຖືກປັບໃໝ 1,000,000 ກີບ ພ້ອມທັງເຮັດບົດບັນທຶກ;
3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ 2,000,000 ກີບຕໍ່ຄັ້ງ ພ້ອມທັງເຮັດບົດບັນທຶກ ແລະ ຈະຖືກໂຈະການນໍາໃຊ້ໃບທະບຽນວິສາຫະກິດ.

ວິສາຫະກິດ ຕ້ອງຕິດປ້າຍຊື່ວິສາຫະກິດ ພາຍໃນ ສາມສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 14 ການບໍ່ປົດປ້າຍຊື່ວິສາຫະກິດ ພາຍຫຼັງຍຸບເລີກວິສາຫະກິດ**

ວິສາຫະກິດ ບໍ່ປົດປ້າຍຊື່ວິສາຫະກິດ ພາຍຫຼັງຍຸບເລີກວິສາຫະກິດ ພາຍໃນ ເຈັດວັນ ນັບແຕ່ວັນມີແຈ້ງການຍຸບເລີກວິສາຫະກິດເປັນຕົ້ນໄປ ຈະຖືກນໍາໃຊ້ມາດຕະການ ດັ່ງນີ້:

1. ຄັ້ງທີໜຶ່ງ ຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ;

2. ຄັ້ງທີສອງ ຈະຖືກປັບໃໝ 1,000,000 ກີບ ພ້ອມທັງເຮັດບົດບັນທຶກ;

3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ 2,000,000 ກີບຕໍ່ຄັ້ງ ພ້ອມທັງເຮັດບົດບັນທຶກ ແລະ ຈະຖືກໂຈະການນຳໃຊ້ໃບທະບຽນວິສາຫະກິດ.

ວິສາຫະກິດ ຕ້ອງປິດປ້າຍຊື່ວິສາຫະກິດ ພາຍໃນ ສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 15 ການນຳໃຊ້ໃບທະບຽນວິສາຫະກິດ ພາຍຫຼັງຖືກໂຈະການນຳໃຊ້ໃບທະບຽນວິສາຫະກິດ ຕາມການສະເໜີຂອງຂະແໜງການກ່ຽວຂ້ອງ**

ວິສາຫະກິດ ທີ່ຖືກໂຈະນຳໃຊ້ໃບທະບຽນວິສາຫະກິດ ຕາມການສະເໜີຂອງຂະແໜງການກ່ຽວຂ້ອງ ແຕ່ຍັງສືບຕໍ່ນຳໃຊ້ໃບທະບຽນວິສາຫະກິດດັ່ງກ່າວ ເຂົ້າໃນການເຄື່ອນໄຫວທຸລະກິດ ຖືວ່າເປັນການເຄື່ອນໄຫວທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ ຈະຖືກປັບໃໝ 2,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

**ມາດຕາ 16 ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ທີ່ບໍ່ມີກົດລະບຽບຂອງຕົນ**

ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ທີ່ບໍ່ມີກົດລະບຽບຂອງຕົນ ຕາມທີ່ກຳນົດໄວ້ໃນມາດຕາ 42 ແລະ ມາດຕາ 87 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ວິສາຫະກິດ ຕ້ອງສ້າງກົດລະບຽບຂອງຕົນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ພາຍໃນ ສາມສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 17 ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ເປີດກອງປະຊຸມສາມັນຂອງຜູ້ຖືຮຸ້ນ**

ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ເປີດກອງປະຊຸມສາມັນຂອງຜູ້ຖືຮຸ້ນຢ່າງໜ້ອຍປີລະຄັ້ງ ຕາມທີ່ກຳນົດໄວ້ໃນມາດຕາ 139 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຖືກກ່າວເຕືອນ, ສຶກສາອົບຮົມ ແລະ ເຮັດບົດບັນທຶກ.

**ມາດຕາ 18 ຜູ້ຈັດການຂອງ ວິສາຫະກິດຮຸ້ນສ່ວນ ແລະ ຜູ້ອຳນວຍການຂອງ ບໍລິສັດ ທີ່ບໍ່ອອກໃບຮຸ້ນ**

ຜູ້ຈັດການຂອງ ວິສາຫະກິດຮຸ້ນສ່ວນ ແລະ ຜູ້ອຳນວຍການຂອງ ບໍລິສັດ ທີ່ບໍ່ອອກໃບຮຸ້ນໃຫ້ ຂາຮຸ້ນ ແລະ ຜູ້ຖືຮຸ້ນ ຕາມທີ່ກຳນົດໄວ້ໃນມາດຕາ 45, 105, 173, 185 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ຜູ້ຈັດການ, ຜູ້ອຳນວຍການ ຕ້ອງອອກໃບຮຸ້ນໃຫ້ ຂາຮຸ້ນ ແລະ ຜູ້ຖືຮຸ້ນ ພາຍໃນ ສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 19 ບໍລິສັດຈຳກັດ ທີ່ບໍ່ສ້າງບັນຊີທະບຽນຜູ້ຖືຮຸ້ນ**

ບໍລິສັດຈຳກັດ ທີ່ບໍ່ສ້າງບັນຊີທະບຽນຜູ້ຖືຮຸ້ນ ຕາມທີ່ກຳນົດໄວ້ໃນມາດຕາ 110 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000.000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ບໍລິສັດຈຳກັດ ຕ້ອງສ້າງບັນຊີທະບຽນຜູ້ຖືຮຸ້ນ ພາຍໃນ ສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 20 ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ສ້າງບັນຊີທະບຽນຜູ້ອຳນວຍການ**

ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ສ້າງບັນຊີທະບຽນຜູ້ອຳນວຍການ ຕາມທີ່ກຳນົດໄວ້ໃນມາດຕາ 131 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ບໍລິສັດຈຳກັດ, ບໍລິສັດມະຫາຊົນ ຕ້ອງສ້າງບັນຊີທະບຽນຜູ້ອຳນວຍການ ພາຍໃນ ສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 21 ບໍລິສັດຈຳກັດ ທີ່ບໍ່ມີສະພາບໍລິຫານ ແລະ ຜູ້ກວດສອບບັນຊີ**

ບໍລິສັດຈຳກັດ ທີ່ບໍ່ມີສະພາບໍລິຫານ ແລະ ຜູ້ກວດສອບບັນຊີ ກໍລະນີ ມີຊັບສິນເກີນກວ່າ 50,000,000,000 ກີບ ຕາມທີ່ກຳນົດໄວ້ໃນມາດຕາ 132 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ບໍລິສັດຈຳກັດ ຕ້ອງສ້າງຕັ້ງສະພາບໍລິຫານ ແລະ ແຕ່ງຕັ້ງຜູ້ກວດສອບບັນຊີ ພາຍໃນເວລາ ສາມສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

**ມາດຕາ 22 ບໍລິສັດຈຳກັດ ທີ່ບໍ່ມີຄັງສຳຮອງຕາມລະບຽບການ**

ບໍລິສັດຈຳກັດ ທີ່ບໍ່ມີຄັງສຳຮອງຕາມລະບຽບການ ຕາມທີ່ໄດ້ກຳນົດໄວ້ມາດຕາ 154 ຂອງກົດໝາຍວ່າດ້ວຍວິສາຫະກິດ ຈະຖືກປັບໃໝ 1,000,000 ກີບຕໍ່ຄັ້ງ ພ້ອມທັງຈະຖືກກ່າວເຕືອນ, ສຶກສາອົບຮົມ, ເຮັດບົດບັນທຶກ ແລະ ບໍລິສັດຈຳກັດ ຕ້ອງສ້າງຄັງສຳຮອງຕາມລະບຽບການ ພາຍໃນ ສາມສິບວັນ ນັບແຕ່ວັນທີເຮັດບົດບັນທຶກເປັນຕົ້ນໄປ.

## ໝວດທີ 3
## ການນຳໃຊ້ມາດຕະການ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ຕໍ່ຜູ້ລະເມີດກົດໝາຍວ່າດ້ວຍວິສາຫະກິດ

**ມາດຕາ 23 ການນຳໃຊ້ມາດຕະການ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ**

ເຈົ້າໜ້າທີ່ທະບຽນວິສາຫະກິດ ນຳໃຊ້ມາດຕະການຕໍ່ການລະເມີດ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຕ້ອງດຳເນີນຂັ້ນຕອນການຕິດຕາມ ກວດກາ ແຕ່ລະກໍລະນີ ດັ່ງນີ້:

1. ການເຄື່ອນໄຫວທຸລະກິດ ໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ; ການດຳເນີນທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ການບໍ່ຕິດປ້າຍຊື່ວິສາຫະກິດ, ການບໍ່ປົດປ້າຍຊື່ວິສາຫະກິດພາຍຫຼັງຍຸບເລີກວິສາຫະກິດ, ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ທີ່ບໍ່ມີກົດລະບຽບບໍລິສັດຂອງຕົນ, ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ເປີດກອງປະຊຸມສາມັນຂອງຜູ້ຖືຮຸ້ນ, ຜູ້ຈັດການຂອງວິສາຫະກິດຮຸ້ນສ່ວນ ແລະ ຜູ້ອຳນວຍການຂອງບໍລິສັດ ທີ່ບໍ່ອອກໃບຮຸ້ນ, ບໍລິສັດຈຳກັດ ທີ່ບໍ່ສ້າງບັນຊີທະບຽນຜູ້ຖືຮຸ້ນ, ບໍລິສັດຈຳກັດ ແລະ ບໍລິສັດມະຫາຊົນ ທີ່ບໍ່ສ້າງບັນຊີທະບຽນຜູ້ອຳນວຍການ, ບໍລິສັດຈຳກັດ ທີ່ບໍ່ມີສະພາບໍລິຫານ ແລະ ຜູ້ກວດສອບບັນຊີ, ບໍລິສັດຈຳກັດ ທີ່ບໍ່ມີຄັງສຳຮອງຕາມລະບຽບການ ໃຫ້ດຳເນີນການສ້າງແຜນກວດກາ, ແຕ່ງຕັ້ງຄະນະກວດກາ ແລະ ດຳເນີນການຕາມຮູບການກວດກາ ຕາມທີ່ກຳນົດໄວ້ໃນມາດຕາ 215 ຂອງກົດໝາຍວ່າດ້ວຍວິສາຫະກິດ.

2. ການນຳເອົາໃບທະບຽນວິສາຫະກິດ ໃຫ້ບຸກຄົນອື່ນນຳໃຊ້, ການປອມແປງໃບທະບຽນວິສາຫະກິດ ຫຼື ນຳໃຊ້ໃບທະບຽນວິສາຫະກິດປອມແປງ, ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມຈິງ ແລະ/ຫຼື ບໍ່ຖືກຕ້ອງຕາມກົດໝາຍ ໃຫ້ດຳເນີນການກວດກາພາຍຫຼັງໄດ້ຮັບການສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

3. ການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ການຍຸບເລີກວິສາຫະກິດ ໂດຍບໍ່ແຈ້ງເຈົ້າໜ້າທີ່ທະບຽນວິສາຫະກິດ, ການນຳໃຊ້ໃບທະບຽນວິສາຫະກິດພາຍຫຼັງຖືກໂຈະການນຳໃຊ້ໃບທະບຽນວິສາຫະກິດຕາມການສະເໜີຂອງຂະແໜງການກ່ຽວຂ້ອງ ໃຫ້ດຳເນີນການກວດກາ ໃນເວລາພິຈາລະນາຮັບຄຳຮ້ອງ ແລະ ເອກະສານປະກອບ ກ່ຽວກັບການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ຍຸບເລີກວິສາຫະກິດ.

4. ການອອກໜັງສືທີ່ບໍ່ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ຫຼື ສັ່ງໃຫ້ວິສາຫະກິດຕໍ່ອາຍຸໃບທະບຽນວິສາຫະກິດ, ການປະຕິເສດ ໃນການແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ ໂດຍບໍ່ມີເຫດຜົນ, ການຮຽກເອົາເອກະສານເພີ່ມເຕີມ ແລະ ການກົດໜ່ວງຖ່ວງດຶງເອກະສານແຈ້ງຂຶ້ນ, ປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ແລະ ຍຸບເລີກວິສາຫະກິດ, ການປະຕິເສດການເປີດເຜີຍຂໍ້ມູນທະບຽນວິສາຫະກິດ ໃຫ້ດຳເນີນການກວດກາເວລາໃດກໍໄດ້ ເມື່ອພົບເຫັນການລະເມີດ.

ສຳລັບການກວດກາ ຕາມທີ່ກຳນົດໄວ້ໃນຂໍ້ທີ 3 ຂອງມາດຕານີ້ ຫ້າມເຈົ້າໜ້າທີ່ທະບຽນວິສາຫະກິດ ກວດກາ ຫຼື ຮຽກເອກະສານເພີ່ມເຕີມໃນເວລາປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫຼື ຍຸບເລີກວິສາຫະກິດ ຢ່າງເດັດຂາດ.

**ມາດຕາ 24 ຂັ້ນຕອນການນຳໃຊ້ມາດຕະການ**

ການນຳໃຊ້ມາດຕະການຕໍ່ການລະເມີດ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສັງລວມຂໍ້ມູນ ແລະ ຫຼັກຖານ ກ່ຽວກັບການລະເມີດ;
2. ກໍລະນີ ທີ່ມີຄວາມຈຳເປັນ ຕ້ອງໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
3. ກຳນົດມາດຕະການ ຊຶ່ງຕ້ອງລະບຸລາຍລະອຽດ ກ່ຽວກັບການລະເມີດ, ບ່ອນອີງດ້ານນິຕິກຳ, ຜູ້ລະເມີດ, ມາດຕະການທີ່ຈະນຳໃຊ້, ໄລຍະເວລາການນຳໃຊ້, ຈຸດປະສົງ ແລະ ມາດຕະການເພີ່ມເຕີມ ທີ່ຈະນຳໃຊ້ ກໍລະນີບໍ່ສາມາດບັນລຸຕາມຈຸດປະສົງດັ່ງກ່າວ;
4. ຮຽກຜູ້ລະເມີດ ຫຼື ຕົວແທນຂອງຜູ້ລະເມີດ ເຂົ້າມາເຮັດບົດບັນທຶກກັບເຈົ້າໜ້າທີ່ທະບຽນວິສາຫະກິດ ສຳລັບມາດຕະການສຶກສາອົບຮົມ, ກ່າວເຕືອນ ແລະ ມາດຕະການປັບໃໝ. ກໍລະນີບໍ່ເຂົ້າມາເຮັດບົດບັນທຶກ ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະອອກໜັງສືແຈ້ງການນຳໃຊ້ມາດຕະການຕໍ່ການລະເມີດ;
5. ອອກແຈ້ງການໂຈະການນຳໃຊ້ໃບທະບຽນວິສາຫະກິດ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
6. ຕິດຕາມ, ກວດກາ, ປະເມີນ ແລະ ລາຍງານການຈັດຕັ້ງປະຕິບັດມາດຕະຖານ ຕາມທີ່ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 25 ການຕິດຕາມກວດກາ, ການປະເມີນ ແລະ ການລາຍງານ**

ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຕ້ອງຕິດຕາມ ກວດກາ ການນຳໃຊ້ມາດຕະການຢ່າງເປັນລະບົບ ແລະ ຕໍ່ເນື່ອງ, ໃຫ້ມີການເກັບກຳສະຖິຕິແບບລະອຽດ ເພື່ອໃຫ້ສາມາດຮູ້ໄດ້ການລະເມີດແຕ່ລະປະເພດ, ສະຖິຕິການລະເມີດຂອງແຕ່ລະວິສາຫະກິດ ແນໃສ່ເຮັດໃຫ້ການນຳໃຊ້ມາດຕະການໄດ້ຢ່າງຖືກຕ້ອງ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ຕ້ອງມີການປະເມີນ ແລະ ການລາຍງານ ການນຳໃຊ້ມາດຕະການຢ່າງເປັນລະບົບປົກກະຕິ ແລະ ທັນການ, ໃຫ້ມີການປະເມີນຄືນໃນແຕ່ລະປີ ກ່ຽວກັບພຶດຕິກຳການລະເມີດ, ມາດຕະການ, ຄູ່ມືການນຳໃຊ້ ເພື່ອປັບປຸງໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງວຽກງານຄຸ້ມຄອງວິສາຫະກິດ ໃນແຕ່ລະໄລຍະ.

## ໝວດທີ 4
## ການນຳໃຊ້ເງິນຈາກການປັບໃໝ

**ມາດຕາ 26 ການຊຳລະເງິນປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຜູ້ລະເມີດກົດໝາຍ ວ່າດ້ວຍວິສາຫະກິດ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຊຳລະຜ່ານບັນຊີຂອງກະແໜງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 27 ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຕາມຂໍ້ຕົກລົງສະບັບນີ້ 60% ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ 40% ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານຕາມເປົ້າໝາຍ ຕາມທີ່ກຳນົດໄວ້ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້. ສຳລັບການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ. ջ

**ມາດຕາ 28 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ຈະຖືກນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການສ້າງ, ປັບປຸງ ແລະ ເຜີຍແຜ່ນິຕິກຳ ກ່ຽວກັບ ວຽກງານຄຸ້ມຄອງວິສາຫະກິດ;
2. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຄຸ້ມຄອງວິສາຫະກິດ ລວມທັງວຽກງານທີ່ຈຳເປັນ ແລະ ຮີບດ່ວນ;
3. ການຈັດຊື້ອຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງວິສາຫະກິດ;
4. ວຽກງານອື່ນ ກ່ຽວກັບວຽກງານຄຸ້ມຄອງວິສາຫະກິດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງວິສາຫະກິດ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ, ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ນະຄອນຫຼວງ, ແຂວງ ແລະ ພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ສີ່ສິບຫ້າວັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ